ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1114 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 24 ສິງຫາ 2022

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

ເລື່ອງ: ແຈ້ງປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້:

1. ປັບຂຶ້ນສະເພາະລາຄາຂາຍຍ່ອຍນ້ຳມັນກາຊວນ 200 ກີບ/ລິດ ແລະ ເລີ່ມປະຕິບັດວັນທີ 25 ສິງຫາ 2022, ເວລາ 06:00 ໂມງ.
2. ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0767/ກຄພນ, ລົງວັນທີ 23 ສິງຫາ 2022 ຈົນກວ່າຈະມີການປ່ຽນແປງ.
3. ລາຄາລຸ່ມນີ້ ແມ່ນລາຄາຂາຍຍ່ອຍໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 25,750 | 19,240 | 18,860 |
| 2 | ແຂວງຜົ້ງສາລີ | 26,390 | 19,880 | 19,500 |
| 3 | ແຂວງຫຼວງນ້ຳທາ | 26,110 | 19,600 | 19,220 |
| 4 | ແຂວງອຸດົມໄຊ | 26,230 | 19,720 | 19,340 |
| 5 | ແຂວງບໍ່ແກ້ວ | 25,850 | 19,340 | 18,960 |
| 6 | ແຂວງຫຼວງພະບາງ | 26,120 | 19,610 | 19,230 |
| 7 | ແຂວງໄຊຍະບູລີ | 26,000 | 19,490 | 19,110 |
| 8 | ແຂວງຫົວພັນ | 26,150 | 19,640 | 19,260 |
| 9 | ແຂວງຊຽງຂວາງ | 25,940 | 19,430 | 19,050 |
| 10 | ແຂວງວຽງຈັນ | 25,750 | 19,240 | 18,860 |
| 11 | ແຂວງບໍລິຄຳໄຊ | 25,830 | 19,320 | 18,940 |
| 12 | ແຂວງຄຳມ່ວນ | 25,780 | 19,270 | 18,890 |
| 13 | ແຂວງສະຫວັນນະເຂດ | 25,780 | 19,270 | 18,890 |
| 14 | ແຂວງສາລະວັນ | 25,960 | 19,450 | 19,070 |

| | | | | |
|---|---|---|---|---|
| 15 | ແຂວງຈຳປາສັກ | 25,810 | 19,300 | 18,920 |
| 16 | ແຂວງເຊກອງ | 25,960 | 19,450 | 19,060 |
| 17 | ແຂວງອັດຕະປື | 25,990 | 19,480 | 19,100 |
| 18 | ແຂວງໄຊສົມບູນ | 26,030 | 19,520 | 19,140 |

4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.

5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1078/ອຄ, ລົງວັນທີ 18 ສິງຫາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ເຊັນແທນລັດຖະມົນຕີ

ຮອງລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ບ.ຈັນສຸກ ແສງພະຈັນ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).